Washington State
Department of Social
& Health Services

# ທາງເລືອກຂອງທ່ານສຳລັບການເກັບເງິນລ້ຽງລູກໃນຂະນະທີ່ໄດ້ຮັບ ໂຄງການຊ່ວຍເຫລືອຊົ່ວຄາວສຳລັບຄອບຄົວທີ່ຈຳເປັນ (TANF)

# Your Options for Child Support Collection while Receiving Temporary Assistance for Needy Families (TANF)

ເວັ້ນເສັຽແຕ່ວ່າມັນບໍ່ເປັນການປອດພັຍແກ່ທ່ານ ຫລື ລູກຂອງທ່ານ, ກົດໝາຍຣຽກຮ້ອງວ່າທ່ານຈຳຕ້ອງຊ່ວຍກົມສັງຄົມສົງເຄາະ ແລະ ສາທາຣະນະສຸກ (DSHS), ພະແນກເກັບເງິນລ້ຽງລູກ (DCS), ເກັບເອົາເງິນລ້ຽງລູກໃນເວລາທີ່ທ່ານໄດ້ຮັບການຊ່ວຍເຫລືອ TANF ສຳລັບທ່ານ ແລະ ລູກຂອງທ່ານ. ພະແນກ DCS ໃຫ້ການບໍຣິການບັງຄັບເກັບເງິນລ້ຽງລູກຄົບຖ້ວນເມື່ອເວລາທ່ານໄດ້ຮັບເງິນ TANF. ການບໍຣິການເຫລົ່ານີ້ຈະລວມເອົາໃຫ້ພະແນກ DCS ບັງຄັບໃຊ້ຄວາມຮັບຜິດຊອບຂອງພໍ່ແມ່ອີກຄົນນຶ່ງທີ່ຈະເອົາປະກັນພັຍສຸຂະພາບໃຫ້ ແລະ ຈ່າຍຊ່ວຍໃນສ່ວນແບ່ງຂອງເຂົາເຈົ້າໃນຣາຍຈ່າຍການພະຍາບານທີ່ບໍ່ຖືກຮັບປະກັນສຳລັບລູກຂອງທ່ານ.

## ຂ້າພະເຈົ້າຈະຕ້ອງເຮັດຫຍັງແດ່ເພື່ອຈະຊ່ວຍພະແນກ DCS ເກັບເງິນລ້ຽງລູກ?

- ບອກຊື່ຂອງພໍ່ແມ່ຂອງລູກ.
- ເອົາຣາຍຣະອຽດໃຫ້ພວກເຮົາ ເພື່ອຊ່ວຍຊອກພໍ່ແມ່.
- ຊ່ວຍພິສູດວ່າແມ່ນໃຜເປັນພໍ່ແມ່ຂອງລູກ.

## ເປັນຫຍັງມັນຈຶ່ງເປັນຜົນປະໂຍດທີ່ດີທີ່ຈະກໍ່ຕັ້ງສາຍເລືອດພໍ່ລູກ ແລະ ເກັບເງິນຄ່າລ້ຽງເດັກ?

- ຍ້ອນວ່າເງິນລ້ຽງລູກສາມາດຊ່ວຍເຫລືອທ່ານໃຫ້ບັນລຸຜົນສຳເຣັດການກຸ້ມຕົນເອງ.
- ຍ້ອນວ່າມັນເອົາປະວັດການພະຍາບານຂອງຄອບຄົວໃຫ້ແກ່ລູກຂອງທ່ານໂດຍການຮູ້ຈັກວ່າແມ່ນໃຜເປັນພໍ່ແມ່ຂອງເຂົາເຈົ້າ.
- ຍ້ອນວ່າມັນເອົາສິດທິທາງດ້ານກົດໝາຍໃຫ້ແກ່ລູກຂອງທ່ານໃນການຮັບມໍຣະດົກ, ເງິນປະກັນສັງຄົມ, ເງິນຊ່ວຍເຫລືອນັກຮົບເກົ່າ ແລະ ສວັດດີການຂອງຣັຖບານຢ່າງອື່ນໆ.

## ແມ່ນຫຍັງຈະເກີດຂຶ້ນ ຖ້າຂ້າພະເຈົ້າບໍ່ໃຫ້ຄວາມຮ່ວມມືກັບພະແນກ DCS?

ຖ້າທ່ານບໍ່ຮ່ວມມືກັບພະແນກ DCS ເກັບເງິນລ້ຽງລູກ ແລະ ທ່ານບໍ່ໄດ້ຖືກອະນຸມັດ "ເຫດຜົນດີ" ໃຫ້, ເງິນຊ່ວຍເຫລືອຂອງທ່ານອາດລຸດລົງເຖິງ 25%.

## ເມື່ອໃດມັນຈຶ່ງບໍ່ເປັນຫຍັງທີ່ຈະ *ບໍ່*ຮ່ວມມືນຳພະແນກ DCS?

ທ່ານບໍ່ຈຳເປັນຕ້ອງຊ່ວຍເກັບເງິນລ້ຽງລູກຖ້າພະນັກງານຂອງຫ້ອງການບໍຣິການຊຸມນຸມຊົນ (CSO) ຂອງທ່ານ ຫາກພິຈາຣະນາເຫັນວ່າທ່ານມີເຫດຜົນທີ່ດີທີ່ຈະບໍ່ຊ່ວຍ. ເຫດຜົນທີ່ດີແມ່ນ:

- ທ່ານຢ້ານວ່າທ່ານ ຫລື ເດັກນ້ອຍທີ່ຢູ່ໃນການເບິ່ງແຍງດູແລຂອງທ່ານຈະຖືກທຳຮ້າຍຢ່າງສາຫັດທາງຮ່າງກາຍ ແລະ ຈິດໃຈ.
- ລູກຂອງທ່ານເກີດຈາກການຖືກຂົ່ມຂືນທາງເພດ ຫລື ຈາກຍາດຮ່ວມສາຍເລືອດດຽວກັນ.
- ທ່ານໄດ້ເລີ່ມການດຳເນີນການຮັບເອົາມາລ້ຽງ, ຫລື ທ່ານກຳລັງຢູ່ໃນແຜນອົບຮົມປຶກສາ (ດົນນານເຖິງສາມເດືອນ) ກັບອົງການຈັດສັນຊັບຊ້ອນເດັກ ເພື່ອການຮັບເອົາມາລ້ຽງ.

## ຂ້າພະເຈົ້າຄວນຈະເອົາຫຍັງໃຫ້ພະນັກງານ CSO ຂອງຂ້າພະເຈົ້າເພື່ອສະແດງວ່າຂ້າພະເຈົ້າມີເຫດຜົນດີທີ່ຈະບໍ່ຊ່ວຍ?

- ຄຳແຈ້ງການທີ່ຖືກເຊັນຊື່ໃສ່ຂອງທ່ານເວົ້າເຖິງຄວາມຢ້ານກົວ ແລະ ຄວາມຂ້ອງໃຈຂອງທ່ານ.
- ບັນທຶກເອກສານຕ່າງໆລວມທັງບັນທຶກພະຍາບານ, ຕຳຣວດ, ຫລື ບັນທຶກອື່ນໆກ່ຽວກັບເຣື່ອງການຫວງຄວາມປອດໄພຂອງທ່ານ, ຖ້າມີຢູ່.

## ຂ້າພະເຈົ້າຍັງຈະສາມາດໃຫ້ເງິນລ້ຽງລູກຖືກເກັບເອົາຢູ່ບໍ່ ແລະ ບໍ່ຮ່ວມມືນຳພະແນກ DCS?

ໄດ້ຢູ່ຍ້ອນວ່າມັນມີສອງຣະດັບແຕກຕ່າງກັນທີ່ທ່ານສາມາດເລືອກເອົາ; ຣະດັບ A ຫລື ຣະດັບ B.

- ຣະດັບ A: ທ່ານຈະ *ບໍ່* ຖືກຮ້ອງຂໍໃຫ້ຮ່ວມມືນຳພະແນກ DCS. ເງິນລ້ຽງລູກຈະບໍ່ຖືກເກັບເອົາ.
- ຣະດັບ B: ທ່ານຈະ *ບໍ່ ຖື*ກຮ້ອງຂໍໃຫ້ຮ່ວມມືນຳພະແນກ DCS *ແຕ່ວ່າ* ເງິນລ້ຽງລູກຈະຖືກເກັບເອົາ ແລະ ທີ່ຢູ່ຂອງທ່ານຍັງຈະຖືກປົກປ້ອງໄວ້ຢູ່ຄືເກົ່າ.

## ຂ້າພະເຈົ້າຄວນຈະເຮັດແນວໃດຖ້າຫາກມັນບໍ່ປອດພັຍອີກແລ້ວສຳລັບພະແນກ DCS ທີ່ຈະເກັບເງິນລ້ຽງເດັກ?

- ໃຫ້ຕິດຕໍ່ຫາພະນັກງານ CSO ຂອງທ່ານ ແລະ ເຈົ້າໜ້າທີ່ຂອງຫ້ອງການເກັບເງິນລ້ຽງເດັກ DCS ໃນທັນໃດໂລດ. ໃຫ້ບອກທັງສອງຄົນກ່ຽວກັບສະຖານະການໃໝ່ຂອງທ່ານ.
- ຮ້ອງຂໍເອົາເຫັດຜົນດີໂດຍການຂຽນປະກອບຟອມໃບນີ້.
- ຖ້າຫາກວ່າທ່ານມີເຫດຜົນດີຣະດັບ B ຢູ່ໃນປັດຈຸບັນນີ້,ໃຫ້ຄິດພິຈາຣະນາທີ່ຈະປ່ຽນມາເປັນຣະດັບ A.
- ຮ້ອງຂໍເອົາການສົ່ງຕໍ່ໄປຫາຜູ້ຊ່ວຍເຫລືອເຣື່ອງຄວາມຮຸນແຮງໃນຄອບຄົວຢູ່ໃນສະຖານທີ່ຫລືຢູ່ຕາມຊຸມນຸມຊົນ.

## ຖ້າຂ້າພະເຈົ້າບໍ່ເຫັນພ້ອມກັບການການຕັດສິນມີເຫດຜົນດີຂອງຫ້ອງການ CSO ແລ້ວຈະເຮັດແນວໃດ?

ທ່ານມີສິດທີ່ຈະຮ້ອງຂໍເອົາການຟັງເຣື່ອງຈາກອຳນາດການປົກຄອງກ່ຽວກັບການຕັດສິນມີເຫດຜົນດີ. ການຟັງເຣື່ອງຈາກອຳນາດການປົກຄອງເປັນການກວດເບິ່ງການຕັດສິນມີເຫດຜົນດີ.ຈົ່ງເບິ່ງ"ການດຳເນີນການຟັງເຣື່ອງຈາກອຳນາດການປົກຄອງ"ຢູ່ໜ້າຕໍ່ໄປເພື່ອຣາຍຣະອຽດກ່ຽວກັບການຟັງເຣື່ອງຈາກອຳນາດການປົກຄອງ.

ຖ້າທ່ານມີຄຳຖາມແນວໃດກ່ຽວກັບການຊ່ວຍໃນການເກັບເອົາເງິນລ້ຽງລູກ, ໃຫ້ຖາມກ່ອນໆທີ່ທ່ານຈະເຊັນຊື່ໃສ່ຟອມໃບນີ້. ໃຫ້ໝາຍເອົາຂໍ€ຄວາມດຽວທີ່ນັ້ນ.

☐ ຂ້າພະເຈົ້າເຊື່ອວ່າມັນປອດພັຍແກ່ຂ້າພະເຈົ້າເອງພ້ອມທັງລູກທັງຫລາຍຂອງຂ້າພະເຈົ້າເພື່ອໃຫ້ພະແນກ DCS ເກັບເງິນລ້ຽງລູກ. ຂ້າພະເຈົ້າເຂົ້າໃຈວ່າຂ້າພະເຈົ້າຕ້ອງໄດ້ຊ່ວຍພະແນກ DCSເກັບເງິນລ້ຽງລູກ ແລະ ຖ້າຂ້າພະເຈົ້າຫາກບໍ່ຊ່ວຍ ສ່ວນຂອງເງິນຊ່ວຍເຫລືອຂອງຂ້າພະເຈົ້າອາດລຸດລົງເຖິງ 25%.

☐ ຂ້າພະເຈົ້າມີເຫດຜົນດີທີ່ຈະບໍ່ຊ່ວຍ. ກະຣຸນາອະທິບາຍເຫດຜົນຂອງທ່ານເວົ້າເຖິງຄວາມຢ້ານກົວ ແລະ ຄວາມຫ່ວງໄຍຂອງທ່ານໃສ່ໜ້າຕໍ່ໄປ.

| |
|---|
| ກະຣຸນາອະທິບາຍເຫດຜົນຂອງທ່ານສຳລັບການຮ້ອງຂໍເອົາເຫດຜົນດີເວົ້າເຖິງຄວາມຢ້ານກົວ ແລະ ຄວາມຫ່ວງໄຍຂອງທ່ານ. |

**ຂ້າພະເຈົ້າສາບານວ່າຄຳແຈ້ງການຢູ່ຂ້າງເທິງນີ້ແມ່ນຄວາມຈິງ.**

| | |
|---|---|
| ຊື່ຂອງຜູ້ຮັບ (ຂຽນເປັນຕົວ) | ເລກ ID ລູກຄ້າ |
| ລາຍເຊັນຂອງລູກຄ້າ | ວັນທີ |

**ຂ້າພະເຈົ້າໄດ້ຖືກເອົາໂກປີຂອງຟອມໃບນີ້ໃຫ້.**

| | |
|---|---|
| ລາຍເຊັນຂອງພະນັກງານ | ວັນທີ |
| ຊື່ຂອງພໍ່ແມ່ຜູ້ທີ່ບໍ່ມີຄວາມຄຸ້ມຄອງ | ເລກ ID ລູກຄ້າ |
| ຊື່ຂອງເດັກນ້ອຍ | ເລກ ID ລູກຄ້າ |
| ຊື່ຂອງເດັກນ້ອຍ | ເລກ ID ລູກຄ້າ |
| ຊື່ຂອງເດັກນ້ອຍ | ເລກ ID ລູກຄ້າ |

## ການດຳເນີນການຟັງເຣື່ອງຈາກອຳນາດການປົກຄອງ

1. ທ່ານສາມາດໂທຫາຫ້ອງການບໍຣິການຊຸມນຸມຊົນຫ້ອງຖິ່ນຂອງທ່ານໄດ້ເພື່ອຂໍໃຫ້ທົບທວນສຳນວນເອກສານຂອງທ່ານ.
2. ທ່ານສາມາດໂທຫາຫ້ອງການບໍຣິການຊຸມນຸມຊົນຂອງທ່ານຫລືຂຽນຈົດໝາຍຫາ Office of Administrative Hearings, PO Box 42489, Olympia, WA 98504-2489 ພາຍໃນ 90 ມື້ ເພື່ອຂໍການຟັງເຣື່ອງ. ຖ້າທ່ານຂໍການຟັງເຣື່ອງ,ພະແນກ DCSຈະບໍ່ທັນເລີ່ມເຮັດວຽກກັບສຳນວນຂອງທ່ານ ຈົນກວ່າການຟັງເຣື່ອງຖືກຕັດສິນສຸດທ້າຍ.

ທະນາຍຄວາມຫລືບຸກຄົນທີ່ທ່ານເລືອກ ສາມາດເປັນຕົວແທນໃຫ້ທ່ານໄດ້ໃນຕອນຟັງເຣື່ອງ, ຫລືທ່ານສາມາດແທນຕົວຂອງທ່ານເອງກໍ່ໄດ້.

**ຂ້າພະເຈົ້າສາມາດໄດ້ຄຳແນະນຳດ້ານກົດໝາຍຫລືການມີຕົວແທນໄດ້ບໍ່?**

ທ່ານສາມາດໂທຫາສາຍບໍຣິການດ້ານກົດໝາຍທີ່ວຮັດໄດ້ໃນເລກ 1-888-201-1014.